ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

=== 000 ===

ກະຊວງສຶກສາທິການ ເລກທີ: /ສສ.ສປຄ/09

ສູນຮັບປະກັນຄຸນະພາບການສຶກສາ ນະຄອນຫລວງ, ວັນທີ

ຂໍ້ກຳນົດກ່ຽວກັບ
ມາດຕະຖານ ແລະຕົວຊີ້ວັດຄຸນະພາບການສຶກສາ ສຳລັບການສຶກສາຊັ້ນສູງ

ພາກທີ I ຂໍ້ກຳນົດລວມ

ມາດຕາ1. ເນື້ອໃນ ແລະເປົ້າໝາຍປະຕິບັດ

1. ຂໍ້ກຳນົດສະບັບນີ້ກຳນົດມາດຖານ ເພື່ອປະເມີນຄຸນະພາບການສຶກສາຂອງສະຖາບັນການສຶກສາ ລະດັບ ການສຶກສາຊັ້ນສູງ.
2. ຂໍ້ກຳນົດສະບັບນີ້ ນຳໃຊ້ປະຕິບັດກັບບັນດາສະຖາບັນການສຶກສາຊັ້ນສູງ ທີ່ເປັນວິທະຍາໄລ ຫລືທຽບເທົ່າວິທະຍາໄລ ແລະມະຫາວິທະຍາໄລ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສຶກສາ ມາດຕາ21 ທັງພາກລັດ ແລະພາກເອກະຊົນໃນຂອບເຂດທົ່ວປະເທດ.

ມາດຕາ2. ຄຸນະພາບການສຶກສາ ແລະມາດຖານເພື່ອຕີລາຄາຄຸນະພາບ

1. ຄຸນະພາບການສຶກສາຢູ່ສະຖາບັນການສຶກສາ ແມ່ນການຕອບສະໜອງໄດ້ຕາມຈຸດໝາຍການກໍ່ສ້າງທີ່ສະຖາບັນການສຶກສາວາງອອກ ໂດຍຈຸດໝາຍດັ່ງກ່າວ ໄດ້ຮັບການອະນຸມັດຈາກລັດຖະມົນຕີວ່າການກະຊວງສຶກສາທິການ, ຮັບປະກັນໄດ້ບັນດາຄວາມຮຽກຮ້ອງຕ້ອງ ການ ຕາມກົດໝາຍວ່າດ້ວຍການສຶກສາ ມາດຕາ21, ໂດຍການກໍ່ສ້າງຊັບພະຍາກອນມະນຸດ ຕ້ອງສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ໃນການນຳໃຊ້ແຮງງານ ເພື່ອພັດທະນາເສດຖະກິດ-ສັງຄົມ ແລະຄວາມກ້າວໜ້າຂອງຂະແໜງການ.
2. ມາດຖານເພື່ອຕີລາຄາຄຸນະພາບການສຶກສາ ແມ່ນລະດັບຄວາມຕ້ອງການ, ເງື່ອນໄຂ ແລະ ຂໍ້ບັງຄັບຕ່າງໆ ທີ່ແຕ່ລະສະຖາບັນການສຶກສາ ຕ້ອງຕອບສະໜອງ ເພື່ອໃຫ້ອົງການຈັດຕັ້ງກ່ຽວຂ້ອງຮັບຮອງມາດຖານຄຸນະພາບການສຶກສາ.

ມາດຕາ3. ຈຸດປະສົງຂອງການວາງມາດຖານ ເພື່ອຕີລາຄາຄຸນະພາບການສຶກສາ

ມາດຖານຄຸນະພາບການສຶກສາສຳລັບການສຶກສາຊັ້ນສູງ ແມ່ນເພື່ອເປັນເຄື່ອງມືໃຫ້ສະຖາບັນການສຶກສາໄດ້ນຳໃຊ້ເພື່ອປະເມີນຕົນເອງ (ການປະເມີນພາຍໃນ) ແນໃສ່ຍົກຄຸນະພາບການສຶກສາຂອງຕົນໃຫ້ດີຂຶ້ນເປັນກ້າວໆ, ເປັນບ່ອນອີງ ແລະ ເປັນຂໍ້ມູນສະເໜີການຈັດຕັ້ງຂັ້ນເທິງກ່ຽວກັບ ສະພາບຄວາມເປັນຈິງຂອງຄຸນະພາບການສຶກສາຂອງຕົນເອງ. ສ້າງເງື່ອນໄຂໃຫ້ການຕີລາຄາຈາກພາຍນອກ (ການປະເມີນພາຍນອກ) ໄປຈົນເຖິງ ການສະເໜີການຮັບຮອງມາດຖານຂອງສະຖາບັນການສຶກສາ, ເພື່ອໃຫ້ສັງຄົມ, ພາກສ່ວນນຳໃຊ້ແຮງງານ, ຜູ້ຮຽນໄດ້ໝັ້ນໃຈຕໍ່ສະຖາບັນການສຶກສາດັ່ງກ່າວ.

ພາກທີ II ມາດຖານຄຸນນະພາບການສຶກສາ ສຳລັບການສຶກສາຊັ້ນສູງ (ມາດຕາ4 - ມາດຕາ13)

ມາດຕະຖານທີ 1. ປັດຊະຍາ, ພາລະກິດ ແລະ ຈຸດປະສົງ

1.1. ປັດຊະຍາ ແລະພາລະກິດຂອງສະຖາບັນການສຶກສາ ໄດ້ຖືກກຳນົດ, ມີເນື້ອໃນຈະແจ້ງ ແລະປະກາດໃຊ້ຢ່າງເປັນທາງການ, ສອດຄ່ອງກັບບົດບາດໜ້າທີ່, ແທດເໝາະກັບທ່າແຮງ ແລະທິດທາງພັດທະນາຂອງສະຖາບັນການສຶກສາ, ຖືກຕ້ອງກັບຄວາມຮຽກຮ້ອງຕ້ອງການໃນການພັດທະນາເສດຖະກິດສັງຄົມຂອງທ້ອງຖິ່ນ, ປະເທດຊາດ ແລະຂະແໜງການນັ້ນໆ.

1.2. ຈຸດປະສົງການກໍ່ສ້າງຂອງສະຖາບັນການສຶກສາ ມີການກວດກາ, ເພີ່ມເຕີມ, ປັບປຸງ ແລະມີການຂັນຂະຫຍາຍຈັດຕັ້ງປະຕິບັດ ຕາມໄລຍະເວລາກຳນົດ.

ມາດຕະຖານທີ 2. ການຈັດຕັ້ງ ແລະ ຄຸ້ມຄອງ

2.1. ໂຄງປະກອບການຈັດຕັ້ງຂອງສະຖາບັນການສຶກສາ ໄດ້ປະຕິບັດຕາມລະບຽບຄຸ້ມຄອງ ທີ່ກະຊວງໄດ້ອະນຸມັດ, ສະຖາບັນການສຶກສາຕ້ອງໄດ້ຂັນຂະຫຍາຍລະບຽບການດັ່ງກ່າວ ອອກເປັນກົນໄກ, ເປັນການຈັດຕັ້ງ ແລະເປັນການເຄື່ອນໄຫວຂອງສະຖາບັນການສຶກສາ.

2.2. ຜູ້ອຳນວຍການ, ຮອງຜູ້ອຳນວຍການ ຕອບສະໜອງໄດ້ຕາມເງື່ອນໄຂ, ມາດຖານ ແລະ ຕ້ອງໄດ້ປະຕິບັດເຕັມພາລະບົດບາດ, ໜ້າທີ່ ແລະຄວາມຮັບຜິດຊອບ ຕາມຂໍ້ກຳນົດທີ່ກະຊວງສຶກສາວາງອອກ.

2.3. ຄະນະບໍລິຫານ, ອາຈານສອນ ແລະພະນັກງານ ປະຕິບັດທຸກພັນທະຂອງຕົນ ແລະ ໄດ້ຮັບການປະກັນທຸກສິດຕາມຂໍ້ກຳນົດຂອງສະຖາບັນການສຶກສາ.

2.4. ສະຖາບັນການສຶກສາ ມີສະພາ ແລະສາມາດຈັດຕັ້ງປະຕິບັດ ຕາມບົດບາດທີ່ກະຊວງສຶກສາໄດ້ກຳນົດໄວ້ສຳລັບການສຶກສາຊັ້ນສູງ.

2.5. ສະຖາບັນການສຶກສາ ມີບັນດາຫ້ອງການວິຊາການ, ຫ້ອງການວິຊາສະເພາະ, ພາກວິຊາ, ໜ່ວຍວິຊາ ທີ່ໄດ້ຈັດຕັ້ງປະຕິບັດ ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງສະຖາບັນການສຶກສາ, ມີການກຳນົດໂຄງສ້າງ ແລະພາລະຫນ້າທີ່ໄວ້ຄັກແນ່.

2.6. ສະຖາບັນການສຶກສາມີອົງການຈັດຕັ້ງພັກ, ອົງການຈັດຕັ້ງພັກມີບົດບາດໃນການຊີ້ນຳນຳພາ ທຸກການເຄື່ອນໄຫວຂອງສະຖາບັນການສຶກສາຕາມລະບຽບມະຕິຂອງພັກ ແລະກົດໝາຍຂອງລັດ.

2.7. ບັນດາອົງການຈັດຕັ້ງມະຫາຊົນ ຂອງສະຖາບັນການສຶກສາ ປະກອບສ່ວນເຂົ້າໃນການປະຕິບັດໃຫ້ບັນລຸ ຈຸດໝາຍການກໍ່ສ້າງຕາມຫຼັກມູນພື້ນຖານການສຶກສາ ແລະ ເຄື່ອນໄຫວຕາມລະບຽບກົດໝາຍຂອງລັດ.

2.8. ຖັນແຖວພະນັກງານຄຸ້ມຄອງສະຖາບັນການສຶກສາ ມີຄຸນສົມບັດ, ມີຄວາມຮູ້ຄວາມສາມາດໃນການຄຸ້ມຄອງວິຊາສະເພາະ ແລະປະຕິບັດສຳເລັດທຸກໜ້າທີ່ໆໄດ້ຮັບມອບໝາຍ.

ມາດຕະຖານທີ 3. ຫລັກສູດການສຶກສາ

3.1. ຫລັກສູດການສຶກສາ ຂອງສະຖາບັນການສຶກສາ ໄດ້ສ້າງຂຶ້ນບົນພື້ນຖານຂອງ ກອບຫລັກສູດ ທີ່ກະຊວງສຶກສາໄດ້ກຳນົດໄວ້ ແລະການມີສ່ວນຮ່ວມຂອງບັນດາຄູອາຈານ, ພະນັກງານບໍລິຫານ, ຜູ້ຕ່າງຫນ້າ ຂອງທຸກອົງການຈັດຕັ້ງ, ສະມາຄົມວິຊາຊີບຕ່າງໆ ແລະພາກສ່ວນຊົມໃຊ້ແຮງງານອື່ນໆ ຕາມທີ່ໄດ້ກຳນົດໄວ້.

3.2. ຫລັກສູດການສຶກສາມີເປົ້າຫມາຍຈະແจ້ງ, ລະອຽດ, ໂຄງຮ່າງສົມເຫດສົມຜົນ, ຕິດພັນກັນເປັນລະບົບ, ຕອບສະຫນອງໄດ້ຄວາມຮູ້ຄວາມສາມາດ ຕາມຄວາມຮຽກຮ້ອງຕ້ອງການໃນລະດັບການສຶກສາຊັ້ນສູງ, ພ້ອມທັງຕອບສະຫນອງໄດ້ກັບ ຄວາມຮຽກຮ້ອງຂອງຕະຫລາດແຮງງານ.

3.3. ແຕ່ລະຫມວດວິຊາ, ລາຍວິຊາ ໃນຫລັກສູດການສຶກສາ ຕ້ອງມີເນື້ອໃນຄົບຖ້ວນ, ມີບົດສອນ, ມີເອກະສານຄົ້ນຄວ້າ ຕອບສະຫນອງກັບເປົ້າຫມາຍຂອງວິຊາ.

3.4. ຫລັກສູດການສຶກສາ ໄດ້ຮັບການເສີມຂະຫຍາຍ, ປັບປຸງເປັນໄລຍະ ອີງຕາມການສຶກສາ ຄົ້ນຄວ້າຫລັກສູດທີ່ກ້າວຫນ້າຂອງຕ່າງປະເທດ, ອີງຕາມຄຳຄິດເຫັນຂອງບັນດາພາກສ່ວນນຳໃຊ້ແຮງງານ, ຜູ້ຮຽນຈົບ, ອົງການຈັດຕັ້ງທີ່ກ່ຽວຂ້ອງກັບການສຶກສາ ແລະ ອົງການຈັດຕັ້ງ ອື່ນໆ ທີ່ກ່ຽວພັນກັບຄວາມຕ້ອງການດ້ານຊັບພະຍາກອນມະນຸດ ເພື່ອການພັດທະນາ ເສດຖະກິດ-ສັງຄົມຂອງທ້ອງຖິ່ນ ແລະຂອງຂະແຫນງການນັ້ນ.

3.5. ຫລັກສູດການສຶກສາ ໄດ້ຖືກອອກແບບໃຫ້ໄປຕາມທິດທາງ ທີ່ສອດຄ່ອງກົມກຽວກັນກັບຫລັກສູດອື່ນໆ.

3.6. ຫລັກສູດການສຶກສາ ໄດ້ຮັບການປະເມີນຕີລາຄາເປັນໄລຍະ ແລະມີການຈັດຕັ້ງ ປັບປຸງຄຸນນະພາບອີງຕາມຜົນຂອງການປະເມີນ.

ມາດຕະຖານທີ 4. ການຮຽນການສອນ

4.1. ມີການຈັດຕັ້ງການຕີລາຄາບັນດາການເຄື່ອນໄຫວສິດສອນ ແລະການປະເມີນຜົນການຮຽນຂອງຄູອາຈານ.

4.2. ມີການປັບປຸ່ງນ ວິທີການຮຽນການສອນ ຕາມທິດທາງການພັດທະນາ ຄວາມສາມາດຮຽນຮູ້ດ້ວຍຕົນເອງ, ສຶກສາຄົ້ນຄວ້າດ້ວຍຕົນເອງ ແລະ ມີຈິດໃຈສາມັກຄີ ຂອງຜູ້ຮຽນ.

4.3. ມີການປັບປຸ່ງນ ວິທີການ ແລະ ຂະບວນການ ໃນການກວດກາຕີລາຄາ ຜົນການຮຽນຂອງນັກຮຽນ; ຮັບປະກັນຄວາມເດັດຂາດ, ພາວະວິໄສ, ແນ່ນອນ, ສະເໝີພາບ ແລະ ສອດຄ່ອງ ກັບຮູບການການກໍ່ສ້າງ, ການສຶກສາຮ່ຳຮຽນ ແລະ ລັກສະນະພິເສດວິຊາຮຽນ, ຮັບປະກັນຄວາມເທົ່າທຽມກັນຂອງຄຸນນະພາບ.

ມາດຕະຖານທີ 5. ຊັບພະຍາກອນມະນຸດ

5.1. ມີຍຸດທະສາດ, ແຜນການ ແລະວິທີການ ໃນການນຳໃຊ້, ກໍ່ສ້າງ, ບຳລຸງ ຫລືຍົກສູງລະດັບວິຊາສະເພາະຂອງຄູອາຈານ, ການນຳ ແລະພະນັກງານ.

5.2. ພະນັກງານຄູສອນປະຈຳ ມີພຽງພໍ ເພື່ອປະຕິບັດຫລັກສູດການສຶກສາ ແລະການຄົ້ນຄວ້າວິທະຍາສາດ.

5.3. ພະນັກງານຄູສອນປະຈຳ ຮັບປະກັນໄດ້ລະດັບການສຶກສາຕາມມາດຕະຖານທີ່ໄດ້ກຳນົດ ແລະໄດ້ສອນຕາມວິຊາທີ່ໄດ້ຮັບການກໍ່ສ້າງມາ.

5.4. ອັດຕາສ່ວນຂອງພະນັກງານຄູສອນທີ່ມີຕຳແໜ່ງເປັນອາຈານ, ຜູ້ຊ່ວຍສາດສະດາຈານ, ຮອງສາດສະດາຈານ ແລະສາດສະດາຈານ. (ຕົວຊີ້ວັດນີ້ ນຳໃຊ້ພຽງແຕ່ສາຍວິຊາຂອງສະຖາບັນທີ່ເປັນມະຫາວິທະຍາໄລ ເທົ່ານັ້ນ, ບໍ່ຖືກນຳໃຊ້ກັບສະຖາບັນທີ່ເປັນວິທະຍາໄລ)

5.5. ພະນັກງານຄູສອນ ມີຄວາມຮູ້ດ້ານພາສາຕ່າງປະເທດ, ມີຄວາມຮູ້ດ້ານໄອທີ ແລະຢູ່ໃນສະພາບແວດລ້ອມທີ່ສາມາດນຳໃຊ້ຄວາມຮູ້ດັ່ງກ່າວ ເຂົ້າໃນການສິດສອນ ແລະການຄົ້ນຄວ້າວິທະຍາສາດ.

5.6. ຖັນແຖວພະນັກງານຄູສອນຕ້ອງໄດ້ຮັບປະກັນດ້ານຄວາມດຸ່ນດ່ຽງ ລະຫວ່າງປະສົບການວຽກງານວິຊາສະເພາະ ກັບ ລະດັບຄວາມຫນຸ່ມນ້ອຍ.

5.7. ນາຍຊ່າງ, ພະນັກງານສະຫນັບສະຫນູນອື່ນໆ ມີປະລິມານພຽງພໍ, ມີຄວາມສາມາດວິຊາສະເພາະ ແລະໄດ້ຮັບການບຳລຸງດ້ານວິຊາສະເພາະ, ດ້ານຫນ້າວຽກຕົວຈິງຢ່າງເປັນປົກກະຕິ.

5.8. ພະນັກງານຫ້ອງສະຫມຸດ ມີປະລິມານພຽງພໍ ເພື່ອບໍລິການວຽກງານຂອງຫ້ອງສະໝຸດຢ່າງມີປະສິດທິຜົນ.

ມາດຕະຖານທີ 6. ຜູ້ຮຽນ ແລະກິດຈະກຳພັດທະນາຜູ້ຮຽນ

6.1. ຜູ້ຮຽນໄດ້ຮັບການຊີ້ນຳພຽງພໍ ກ່ຽວກັບຫລັກສູດການສຶກສາ, ໄດ້ຮັບການກວດກາຕີລາຄາ ແລະອື່ນໆ ຕາມທີ່ກະຊວງສຶກສາທິການໄດ້ກຳນົດໄວ້.

6.2. ຜູ້ຮຽນໄດ້ຮັບປະກັນຕໍ່ທຸກກົນໄກນະ�โยบายສັງຄົມ ແລະໄດ້ຮັບການເບິ່ງແຍງສຸຂະພາບ ເປັນປະຈຳ, ມີເງື່ອນໄຂໃນການເຄື່ອນໄຫວ, ຝຶກຊ້ອມວັນນະຄະດີ, ກີລາ, ໄດ້ຮັບປະກັນຄວາມປອດໄພ ໃນຂອບເຂດຂອງສະຖາບັນການສຶກສາ; ໄດ້ຮັບການແນະນຳວຽກເຮັດງານທຳ ແລະຮູບການຊ່ວຍເຫລືອອື່ນໆ.

6.3. ຜູ້ຮຽນໄດ້ຮັບການສຶກສາ ແລະຊີ້ນຳ ກ່ຽວກັບນະໂຍບາຍ, ແນວຄວາມຄິດ, ແນວທາງຂອງພັກ ແລະກົດຫມາຍຂອງລັດ; ໄດ້ຮັບໂອກາດໃນການຝຶກຝົນຫລໍ່ຫລອມຕົນເອງ ໃນດ້ານແນວຄິດການເມືອງ, ຄຸນສົມບັດ, ແນວທາງດຳລົງຊີວິດ, ນ້ຳໃຈຮັບຜິດຊອບ ແລະທັດສະນະການຮ່ວມມື; ສ້າງເງື່ອນໄຂໃຫ້ເຂົ້າຮ່ວມວຽກງານພັກ, ວຽກງານເປັນຫມູ່ຄະນະ.

6.4. ຜົນການຮຽນຂອງຜູ້ຮຽນ ໄດ້ຮັບການປະກາດ ຢ່າງທັນການ. ໃບປະກາດສະນິຍະບັດແລະໃບຢັ້ງຢືນໄດ້ມອບໃຫ້ຕາມການກຳນົດໄວ້.

6.5. ຮັບປະກັນຄວາມປອດໄພ, ຄວາມແນ່ນອນ ໃນການເກັບຮັກສາຜົນການຮຽນ ທັງໄລຍະ ເວລາທີ່ກຳລັງຮຽນຢູ່ ແລະ ຫລັງຈາກຮຽນຈົບແລ້ວ.

6.6. ມີແຜນການປະເມີນຄຸນະພາບການກໍ່ສ້າງ ຕໍ່ຜູ້ຮຽນຫລັງຈາກທີ່ຈົບອອກໄປ ແລະແຜນການປັບປຸງການເຄື່ອນໄຫວກໍ່ສ້າງ ເພື່ອໃຫ້ແທດເຫມາະກັບຄວາມຮຽກຮ້ອງຂອງສັງຄົມ.

6.7. ມີການຈັດຕັ້ງການປະເມີນຄວາມສາມາດຂອງຜູ້ຮຽນຈົບ ຕາມເປົ້າຫມາຍຂອງການກໍ່ສ້າງ, ມີຜົນການກວດກາກ່ຽວກັບລະດັບ ທີ່ຜູ້ຮຽນຈົບໄດ້ຕອບສະຫນອງຕໍ່ຄວາມຮຽກຮ້ອງຕ້ອງການຊົມໃຊ້ແຮງງານຂອງທ້ອງຖິ່ນ ແລະຂອງຂະແຫນງການ.

6.8. ມີຖານຂໍ້ມູນກ່ຽວກັບສະພາບການຂອງຜູ້ຮຽນຈົບ, ສະພາບການວຽກເຮັດງານທຳ ແລະເງິນເດືອນຂັ້ນເລີ່ມຕົ້ນຫລັງຈາກຈົບການສຶກສາ.

6.9. ມີການແຈ້ງປະກາດ ສະຖິຕິແຕ່ລະປີ ກ່ຽວກັບຜູ້ຮຽນຈົບ ແລະຜູ້ທີ່ມີວຽກເຮັດຖືກກັບຂະແຫນງ.

ມາດຕະຖານທີ 7. ການຄົ້ນຄວ້າວິທະຍາສາດ ແລະການບໍລິການທາງວິຊາການແກ່ສັງຄົມ

7.1. ສ້າງ ແລະຜັນຂະຫຍາຍແຜນການເຄື່ອນໄຫວວິທະຍາສາດ, ເຕັກໂນໂລຍີ ທີ່ສອດຄ່ອງກັບພາລະບົດບາດການຄົ້ນຄວ້າວິທະຍາສາດ ແລະພັດທະນາ ຂອງການສຶກສາຊັ້ນສູງ.

7.2. ມີແນວທາງ ແລະສ້າງເງື່ອນໄຂໃຫ້ການນຳ, ຄູອາຈານ, ພະນັກງານ ແລະຜູ້ຮຽນ ເຂົ້າຮ່ວມ ກິດຈະກຳຄົ້ນຄວ້າວິທະຍາສາດ ແລະການສະແດງອອກຄວາມຄິດສ້າງສັນ.

7.3. ມີການຈັດຕັ້ງຄົ້ນຄ້ວາວິທະຍາສາດ, ມີຫ້ອງທົດລອງ, ຫ້ອງຄົ້ນຄ້ວາວິທະຍາສາດ ໄດ້ສ້າງຕັ້ງຂຶ້ນ ແລະມີການເຄື່ອນໄຫວ.

7.4. ມີບັນດາບົດຄວາມ, ໂຄງການການຄົ້ນຄວ້າວິທະຍາສາດ ທີ່ຖືກຕີພິມຢູ່ບັນດາວາລະສານຄົ້ນຄວ້າວິທະຍາສາດ.

7.5. ມີບັນດາການເຄື່ອນໄຫວທີ່ຫມູນໃຊ້ ບັນດາຜົນການຄົ້ນຄວ້າວິທະຍາສາດ ເຂົ້າໃນການສິດສອນ ແລະປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ.

7.6. ມີການເຄື່ອນໄຫວທີ່ພົວພັນກັບສາກົນ ແລະຫນ່ວຍງານຕ່າງໆຂອງທ້ອງຖິ່ນ.

7.7. ມີສາຍພົວພັນດີ ກັບອຳນາດການປົກຄອງ ແລະບັນດາຫ້ອງການ, ອົງກອນຢູ່ທ້ອງຖິ່ນ.

ມາດຕະຖານທີ 8. ຊັບພະຍາກອນດ້ານການສຶກສາ

8.1. ຫ້ອງສະຫມຸດມີເອກະສານ, ປຶ້ມ, ຫນັງສືພິມ, ວາລະສານ ເພື່ອການສຶກສາຮ່ຳຮຽນ ແລະການຄົ້ນຄວ້າຢ່າງຄົບຖ້ວນ ຕອບສະຫນອງ ຕາມຄວາມຮຽກຮ້ອງຂອງຫລັກສູດ ຕາມກຳນົດ. ການຈັດຕັ້ງບໍລິການຫ້ອງສະຫມຸດຕອບສະຫນອງໄດ້ ຄວາມຮຽກຮ້ອງຕ້ອງການຂອງຜູ້ຮຽນ.

8.2. ມີຫ້ອງຮຽນ ແລະ ເນື້ອທີ່ຫ້ອງຮຽນພຽງພໍ ເພື່ອຕອບສະຫນອງການຮຽນການສອນ; ມີພຽງພໍທຸກຫ້ອງປະຕິບັດຕົວຈິງ, ຫ້ອງທົດລອງ ແລະອຸປະກອນອື່ນໆ ຕາມຫລັກສູດການສຶກສາ.

8.3. ມີພຽງພໍ ຫ້ອງເຮັດວຽກຂອງການນຳ, ຄູອາຈານ ແລະພະນັກງານ.

8.4. ມີຫ້ອງຄອມພິວເຕີ ທີ່ໄດ້ຕໍ່ເປັນລະບົບ ແລະຕໍ່ກັບອິນເຕີເນັດ ເພື່ອຕອບສະຫນອງຄວາມຮຽກຮ້ອງຕ້ອງການຂອງຄູອາຈານ ແລະຜູ້ຮຽນ; ມີວິທີການຊຸກຍູ້ສົ່ງເສີມໃຫ້ຄູອາຈານ ແລະຜູ້ຮຽນ ໄດ້ຍັບໃກ້ເຂົ້າກັບເຕັກໂນໂລຍີຂໍ້ມູນຂ່າວສານ.

8.5. ມີຫໍພັກ, ຮັບປະກັນໄດ້ເນື້ອທີ່ຂອງບ່ອນພັກ ແລະສຳລັບການດຳລົງຊີວິດ ເພື່ອໃຫ້ຜູ້ຮຽນ ໄດ້ເຂົ້າພັກ ແລະມີບັນດາການບໍລິການໃຫ້ຜູ້ຮຽນຕາມການກຳນົດ.

8.6. ມີສະຖານທີ່ອຳນວຍຄວາມສະດວກ ແລະ ເດີ່ນ ໃຫ້ແກ່ກິດຈະກຳວັດທະນະທຳ, ສິລະປະ, ກີລາ, ຮັບປະກັນເນື້ອທີ່ໃຫ້ແກ່ເຂດອອກກຳລັງກາຍຫລິ້ນກີລາ ຕາມກຳນົດ.

8.7. ມີແຜນການພັດທະນາ ແລະນຳໃຊ້ ພື້ນຖານໂຄງລ່າງຂອງສະຖາບັນການສຶກສາ.

8.8. ມີວິທີການ ເພື່ອຮັກສາຊັບສິນ, ລະບຽບວິໃນ, ຄວາມປອດໄພ ໃຫ້ແກ່ການນຳ, ຄູອາຈານ, ພະນັກງານ ແລະຜູ້ຮຽນ.

ມາດຕະຖານທີ 9. ງົບປະມານ ແລະການຄຸ້ມຄອງງົບປະມານ

9.1. ມີກົດລະບຽບ ກ່ຽວກັບການໃຊ້ຈ່າຍພາຍໃນ; ປະຕິບັດການຄຸ້ມຄອງງົບປະມານຕາມຂໍ້ກຳນົດ ດ້ານງົບປະມານ ກັບບັນດາພາກສ່ວນວຽກງານທີ່ມີລາຍຮັບ.

9.2. ມີບັນດາແຫລ່ງທຶນທີ່ຫມັ້ນຄົງ, ຕອບສະຫນອງໄດ້ທຸກການເຄື່ອນໄຫວຝຶກອົບຮົມ, ຄົ້ນຄວ້າວິທະຍາສາດ ແລະບັນດາການເຄື່ອນໄຫວຖືກກົດຫມາຍອື່ນຂອງສະຖາບັນການສຶກສາ.

9.3. ປະຕິບັດການປະກາດ ກ່ຽວກັບງົບປະມານ ເພື່ອໃຫ້ຄູອາຈານ, ການນຳ, ພະນັກງານອື່ນໆ ຮູ້ ແລະກວດສອບກວດກາ.

ມາດຕະຖານທີ 10. ລະບົບ ແລະກົນໄກການປະກັນຄຸນະພາບ

10.1. ມີຫ່ວຍງານຮັບຜິດຊອບ ການປະກັນຄຸນະພາບພາຍໃນ, ປະກອບດ້ວຍພະນັກງານ ແລະວິຊາການທີ່ມີຄວາມຮູ້ ຄວາມສາມາດເພື່ອປະຕິບັດໜ້າທີ່ ການປະກັນຄຸນະພາບການສຶກສາ.

10.2. ມີການເຜີຍແຜ່ຄວາມຮູ້ ແລະທັກສະ ກ່ຽວກັບການປະກັນຄຸນະພາບແກ່ນັກສຶກສາ ແລະຄູອາຈານ ເພື່ອສາມາດມີສ່ວນຮ່ວມໃນຂະບວນການປະກັນຄຸນະພາບ.

ພາກທີ III : ການຈັດຕັ້ງປະຕິບັດ

ມາດຕາ 14. ຄວາມຮັບຜິດຊອບຂອງບັນດາກະຊວງ ແລະອົງການທີ່ມີສະຖາບັນການສຶກສາ

ບັນດາກະຊວງ ແລະອົງການທີ່ມີສະຖາບັນການສຶກສາຊັ້ນສູງ ມີຄວາມຮັບຜິດຊອບ ສະຫນອງເງື່ອນໄຂຈຳເປັນຕ່າງໆ ເພື່ອໃຫ້ສະຖາບັນການສຶກສາ ຕັ້ງຫນ້າແຂ່ງຂັນໃຫ້ບັນລຸ ມາດຖານຄຸນະພາບການສຶກສາ.

ມາດຕາ 15. ຄວາມຮັບຜິດຊອບຂອງສະຖາບັນການສຶກສາ

ບັນດາສະຖາບັນການສຶກສາຊັ້ນສູງ ອີງໃສ່ສະພາບຕົວຈິງຂອງຕົນ ເພື່ອສ້າງແຜນແຂ່ງຂັນ ໃຫ້ບັນລຸໄດ້ມາດຖານຄຸນະພາບການສຶກສາ ໃນແຕ່ລະໄລຍະ ແລະມີວິທີການຈັດຕັ້ງປະຕິບັດບັນດາແຜນການທີ່ໄດ້ວາງອອກ.